# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນພາຍໃນ ສປປ ລາວ, ພາກພື້ນ ແລະ ສາກົນ.......................... ໜ້າ 01 - 07

II. ການເຄື່ອນໄຫວວຽກງານ ຂອງການນໍາ ພັກ ປປ ລາວ....................................... ໜ້າ 08

III. ການເຄື່ອນໄຫວວຽກງານ ຂອງຄະນະນໍາ ຄຕພ............................................... ໜ້າ 09-12


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈໍາເດືອນ **ພຶດສະພາ 2022**


ສໍານັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

Fax 021 414043, Email: Ri.dept.la@Gmail.com, Website: www.cerccp.org.la

# I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ

**1. ສະພາບການພົ້ນເດັ່ນຢູ່ ສປປ ລາວ**

**1) ສະຖານະການໂຄວິດ-19**

ໃນເດືອນ ພຶດສະພາ 2022, ການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ຢູ່ ສປປ ລາວ ສືບຕໍ່ມີທ່າອ່ຽງຫຼຸດລົງ, ຖ້າທຽບໃສ່ເດືອນຜ່ານມາ, ລັດຖະບານ ຈຶ່ງໄດ້ອອກແຈ້ງການ ສະບັບເລກທີ 627/ຫສນຍ, ລົງວັນທີ 07 ພຶດສະພາ 2022 ວ່າດ້ວຍ ການຜ່ອນຜັນມາດຕະການໃນການປ້ອງກັນພະຍາດໂຄວິດ-19 ໂດຍ ໄດ້ອະນຸຍາດໃຫ້ເປີດດ່ານສາກົນທຸກດ່ານ ເພື່ອຕ້ອນຮັບນັກທ່ອງທ່ຽວ ກໍຄືຜູ້ທີ່ປະສົງເດີນທາງເຂົ້າມາ ສປປ ລາວ ລວມທັງອະນຸຍາດໃຫ້ພາກສ່ວນຕ່າງໆ ກຽມຄວາມພ້ອມດ້ານສະຖານທີ່ທ່ອງທ່ຽວ, ໂຮງແຮມ, ຮ້ານອາຫານ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ ເພື່ອຮອງຮັບນັກທ່ອງທ່ຽວ; ອະນຸຍາດໃຫ້ເປີດຮ້ານອາຫານ ແລະ ອື່ນໆ, ແຕ່ຕ້ອງຮັບປະກັນມາດຕະການປ້ອງກັນໂຄວິດ-19. ຮອດວັນທີ 28 ພຶດສະພາ 2022, ມີຜູ້ຕິດເຊື້ອສະສົມທັງໝົດ 209,950, ປິ່ນປົວຫາຍດີ 209,888 ຄົນ; ກໍາລັງປິ່ນປົວຢູ່ໂຮງໝໍ 62 ຄົນ; ເສຍຊີວິດສະສົມທັງໝົດ 756 ຄົນ, ເພີ່ມຂຶ້ນ 22 ຄົນ; ປະຊາຊົນຜູ້ທີ່ໄດ້ສັກວັກແຊງຄົບ 2 ເຂັມ ມີ 5,050,155 (68.82%), ໄດ້ສັກເຂັມທີໜຶ່ງ 5,809,365 (79.17%) ແລະ ຍັງສືບຕໍ່ສັກເຂັມກະຕຸ້ນທີ 3 ແລະ 4 ຕື່ມອີກ.

**2). ສະພາແຫ່ງຊາດ ລາວ-ຫວຽດນາມ ຮັດແໜ້ນການຮ່ວມມື**

ໃນໂອກາດຢ້ຽມຢາມ ສົນທະວະໄມຕີ ຢູ່ ສປປ ລາວ ແຕ່ວັນທີ 15-17 ພຶດສະພາ 2022, ສະຫາຍ ເວືອງ ດິງເຫວະ, ກໍາມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ປະທານສະພາແຫ່ງຊາດ ແຫ່ງ ສສ ຫວຽດນາມ ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ປປ ລາວ, ປະທານປະເທດແຫ່ງ ສປປ ລາວ; ຢ້ຽມຂໍ່ານັບ ສະຫາຍ ພັນຄໍາ ວິພາວັນ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ; ພົບປະສອງຝ່າຍ ກັບ ສະຫາຍ ໄຊສົມພອນ ພົມວິຫານ, ກໍາມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດແຫ່ງ ສປປ ລາວ, ສອງຝ່າຍ ໄດ້ຮ່ວມກັນຕີລາຄາຄືນການພົວພັນຮ່ວມມື ລະຫວ່າງ ສອງປະເທດ ກໍຄື ລະຫວ່າງ ສອງສະພາແຫ່ງຊາດ ລາວ-ຫວຽດນາມ ໃນໄລຍະຜ່ານມາ ແລະ ປຶກສາຫາລືທິດທາງແຜນການພົວພັນຮ່ວມມືໃນຕໍ່ໜ້າເປັນຕົ້ນ ການສືບຕໍ່ຈັດຕັ້ງປະຕິບັດເນື້ອໃນຈິດໃຈ ຂອງບົດບັນທຶກ ວ່າດ້ວຍການຮ່ວມມື ລະຫວ່າງ ສອງປະທານສະພາແຫ່ງຊາດ, ການຮ່ວມກັນຈັດບັນດາກິດຈະກໍາສະເຫຼີມສະຫຼອງປີສາມັກຄີມິດຕະພາບລາວ-ຫວຽດນາມ ປີ 2022, ການແລກປ່ຽນຄະນະຜູ້ແທນຈັດຕັ້ງກອງປະຊຸມສໍາມະນາແລກປ່ຽນບົດຮຽນ, ການຮ່ວມກັນຕິດຕາມກວດກາ, ການຮ່ວມມືສະໜັບສະໜູນ ເຊິ່ງກັນ ແລະ ກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເຊັ່ນ: ການເປັນເຈົ້າພາບ ແລະ ເຂົ້າຮ່ວມ ກອງປະຊຸມສະມັດຊາໃຫຍ່ ລັດຖະສະພາ ລະຫວ່າງຊາດອາຊຽນ (AIPA), ກອງປະຊຸມ 3 ກໍາມາທິການຕ່າງປະເທດ ຂອງສະພາແຫ່ງຊາດກໍາປູເຈຍ, ລາວ ແລະ ຫວຽດນາມ (CLV), ກອງປະຊຸມສະມັດຊາໃຫຍ່ ຂອງສະຫະພັນລັດຖະສະພາກົນ (IPU), ກອງປະຊຸມສະມັດຊາລັດຖະພາ ທີ່ໃຊ້ພາສາຝຣັ່ງ (APF), ກອງປະຊຸມຄູ່ຮ່ວມລັດຖະສະພາ ອາຊີ-ເອີຣົບ (ASEP) ແລະ ການເຄື່ອນໄຫວ ໃນເວທີລັດຖະສະພາອື່ນໆ.

**2. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ**

**1) ພັກກອມມູນິດຫວຽດນາມ**

ວັນທີ 10/5/2022, ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ຄັ້ງທີ 5 ສະໄໝທີ XIII ໄດ້ປິດລົງດ້ວຍຜົນສໍາເລັດອັນຈົບງາມ, ຊຶ່ງ ໄດ້ລົງເລິກໄຈ້ແຍກ, ຕີລາຄາ ແລະ ເຫັນດີເປັນເອກະພາບປະກາດມະຕິສະບັບໃໝ່ວ່າດ້ວຍ "ການສືບຕໍ່ປ່ຽນແປງໃໝ່, ບູລະນະປັບປຸງນະໂຍບາຍ; ຍົກສູງປະສິດທິຜົນໃນການຄຸ້ມຄອງ

ແລະ ນຳໃຊ້ທີ່ດິນ; ສ້າງກຳລັງແຮງ ເພື່ອຫັນຫວຽດນາມ ໃຫ້ກາຍເປັນປະເທດພັດທະນາທີ່ມີລາຍຮັບສູງ"; ຮັບຮອງເອົາບົດລາຍງານສະຫຼຸບໄລຍະ 15 ປີ ແຫ່ງການປະຕິບັດມະຕິກອງປະຊຸມສູນກາງພັກ ຄັ້ງທີ 7 ຄະນະບໍລິຫານງານສູນກາງພັກ ຊຸດທີ X ກ່ຽວກັບກະສິກຳ, ຊາວກະສິກອນ, ຊົນນະບົດ. ສະຫາຍ ຫງວຽນ ຝູ ຈ້ອງ ໄດ້ເນັ້ນໜັກວ່າ: ການຍົກສູງຊີວິດການເປັນຢູ່ຂອງຊາວກະສິກອນ ແລະ ປະຊາຊົນເຂດຊົນນະບົດ ແມ່ນໜ້າທີ່ຂອງທົ່ວພັກ, ທົ່ວປວງຊົນ, ແມ່ນຈຸດສຸມຂອງທັງລະບົບການເມືອງ. ຄຽງຄູ່ກັບນັ້ນ, ຄວນເພີ່ມທະວີການນຳພາຂອງພັກ, ຍົກສູງບົດບາດ, ຄວາມຮັບຜິດຊອບຂອງຜູ້ນຳໜ້າ ແລະ ຍົກສູງກຳລັງຄວາມສາມາດ, ປະສິດທິພາບ, ປະສິດທິຜົນການ ເຄື່ອນໄຫວຂອງບັນດາອົງການຈັດຕັ້ງແຫ່ງລັດ.

**2). ພັກກອມມູນິດຈີນ**

ວັນທີ 07/05/2022, ກອງປະຊຸມຄະນະປະຈຳສະພາຜູ້ແທນປະຊາຊົນແຫ່ງຊາດຈີນ ສະໄໝທີ 13 ຊຸດທີ 117 ໄດ້ໄຂຂຶ້ນຢູ່ ນະຄອນຫຼວງປັກກິ່ງ ໂດຍການເປັນປະທານຂອງ ສະຫາຍ ລີ່ຈ້ານຊູ, ປະທານຄະນະກຳມະການປະຈຳສະພາຜູ້ແທນປະຊາຊົນແຫ່ງຊາດຈີນ. ກອງປະຊຸມຄັ້ງນີ້, ສະຫາຍ ລີ່ເຟີຍ, ປະທານຄະນະກຳມະການລັດຖະທຳມະນູນ ແລະ ກົດໝາຍຂອງສະພາປະຊາຊົນແຫ່ງຊາດຈີນ ໄດ້ລາຍງານກ່ຽວກັບການປັບປຸງຮ່າງກົດໝາຍວ່າດ້ວຍ ກິລາ, ຮ່າງກົດໝາຍວ່າດ້ວຍ ການປົກປັກຮັກສາດິນ, ຮ່າງກົດໝາຍວ່າດ້ວຍ ການປ້ອງກັນກົດໝາຍຜູກຂາດ ແລະ ຮ່າງກົດໝາຍປັບປຸງລະບຽບການຂອງຄະນະປະຈຳສະພາແຫ່ງຊາດຈີນ ແລະ ຮຽກຮ້ອງໃຫ້ບັນດາສະມາຊິກສະພາມີຄຳເຫັນ ແລະ ຄຳສະເໜີຕໍ່ຮ່າງກົດໝາຍທີ່ກ່າວມາຂ້າງເທິງນີ້ ໃຫ້ມີເນື້ອໃນຄົບຖ້ວນ ຮັດກຸມ ເພື່ອຈະໄດ້ຮັບຮອງ ແລະ ຈັດຕັ້ງປະຕິບັດໃນຕໍ່ໜ້າ.

ວັນທີ 15/05/2022, ວາລະສານ "ສະແຫວງຫາຄວາມຈິງ" ສະບັບທີ 10 ຂອງ ສປ ຈີນ ໄດ້ຈັດພິມເພື່ອເຜີຍແຜ່ບົດຄວາມສຳຄັນຂອງ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ພັກກອມມູນິດຈີນ, ປະທານປະເທດຈີນ ຕໍ່ກັບຄວາມເຂົ້າໃຈທີ່ຖືກຕ້ອງ ແລະ ກຳແໜ້ນ ກ່ຽວກັບທິດສະດີ ແລະ ພຶດຕິກຳຕົວຈິງໃນການພັດທະນາປະເທດ. ບົດຄວາມໄດ້ເນັ້ນໜັກໃນຫຼາຍຫົວຂໍ້ ເຊັ່ນ: ການພັດທະນາພາຍໃນ ສປ ຈີນ ທີ່ຄຽງຄູ່ໄປກັບການກ້າວເຂົ້າສູ່ໄລຍະໃໝ່; ສະພາບແວດລ້ອມພາຍໃນ ແລະ ພາຍນອກ ໄດ້ມີການປ່ຽນແປງຢ່າງສັບຊ້ອນ, ມີຫຼາຍບັນຫາໃໝ່ ທີ່ຕ້ອງເຂົ້າໃຈ ແລະ ກຳແໜ້ນ; ຕ້ອງເຂົ້າໃຈຢ່າງຖືກຕ້ອງ ແລະ ກຳແໜ້ນເປົ້າໝາຍຍຸດທະສາດ ແລະ ວິທີການປະຕິບັດ ເພື່ອບັນລຸໄປສູ່ຄວາມຈະເລີນຮຸ່ງເຮືອງ; ພວກເຮົາຕ້ອງສ້າງເງື່ອນໄຂ, ປັບປຸງລະບົບລະບຽບ ແລະ ກ້າວໄປເຖິງຈຸດໝາຍຢ່າງໜັກແໜ້ນ; ການຊຸກຍູ້ການພັດທະນາດ້ວຍຄຸນນະພາບສູງ ຕ້ອງເພີ່ມທະວີການກຳນົດບູລິມະສິດຂອງວຽກເຮັດງານທຳ, ປັບປຸງການຈ້າງງານ, ຊຸກຍູ້ການເຕີບໃຫຍ່ຂອງເສດຖະກິດ, ໜູນຊ່ວຍການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ; ສືບຕໍ່ຂະຫຍາຍພື້ນຖານເສດຖະກິດ, ປັບປຸງຄຸນນະພາບຂອງແຮງງານ; ປັບປຸງລະບົບນະໂຍບາຍສະຫວັດດີການສັງຄົມ ເຊັ່ນ: ການສຶກສາ, ການແພດ, ຜູ້ສູງອາຍຸ ແລະ ທີ່ຢູ່ອາໄສ; ກຳແໜ້ນຕໍ່ການນຳພາຂອງພັກ ແລະ ຄວາມໄດ້ປຽບຂອງລະບອບສັງຄົມນິຍົມ.

**3). ພັກແຮງງານເກົາຫຼີ**

ວັນທີ 16/5/2022, ສູນກາງພັກແຮງງານເກົາຫຼີ ໄດ້ຈັດກອງປະຊຸມກົມການເມືອງສູນກາງພັກຂຶ້ນ ແບບສຸກເສີນ ຮອບທີ 2 ເພື່ອປຶກສາຫາລືກ່ຽວກັບການຮັບມືກັບການແຜ່ລະບາດຂອງພະຍາດໂຄວິດ-19 ໃນ ສປປ ເກົາຫຼີ ພາຍໃຕ້ການເປັນປະທານຂອງ ສະຫາຍ ກິມເຈິງອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ. ກອງປະຊຸມໄດ້ວິເຄາະສະຖານະການການແຜ່ລະບາດຂອງພະຍາດໂຄວິດ-19 ພາຍຫຼັງການຍົກລະດັບຈາກພາວະສຸກເສີນແຫ່ງລັດ ເປັນພາວະສຸກເສີນຂັ້ນສູງສຸດ ແລະ ປ່ຽນແປງວິທີການສະໜອງຢາໃຫ້ຜູ້ຕິດໂຄວິດ-19, ໄດ້ຊີ້ນຳໃຫ້ສົ່ງປ່ອຍຢາສຳຮອງຂອງລັດເພື່ອປິ່ນປົວ ແລະ ຄວບຄຸມການແຜ່ລະບາດຂອງພະຍາດດັ່ງກ່າວ ແລະ ມີຄຳສັ່ງໃຫ້ບັນດາຮ້ານຂາຍຢາເຮັດວຽກ 24

ຊົ່ວໂມງ. ພ້ອມກັນນັ້ນ, ຍັງໄດ້ກຳນົດແນວທາງນະໂຍບາຍ ແລະ ແຜນການຮັບມືສະຖານະການການແຜ່ລະບາດຂອງພະຍາດໂຄວິດ-19 ໃນຕໍ່ໜ້າ. ພາຍຫຼັງສຳເລັດກອງປະຊຸມ, ສະຫາຍ ກິມເຈິງອຸນ ໄດ້ລົງຢ້ຽມຢາມຮ້ານຂາຍຢາ ທີ່ນະຄອນຫຼວງພຽງຢາງ ເພື່ອຕິດຕາມການສະໜອງຢາ ແລະ ຮຽນຮູ້ກ່ຽວກັບປະເພດຂອງຢາ ພ້ອມທັງການຮັກສາສຸຂະອານາໄມຂອງບັນດາຮ້ານຂາຍຢາໃນການຮັບມືການແຜ່ລະບາດຂອງພະຍາດໂຄວິດ-19.

**4). ພັກກອມມູນິດກູບາ**

ວັນທີ 2/5/2022, ສະຫາຍ Miguel Díaz-Canel Bermúdez, ເລຂາທິການທີໜຶ່ງຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດກູບາ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາສາກົນ ເພື່ອຄວາມສາມັກຄີກັບກູບາ ທີ່ ນະຄອນ ຫຼວງລາຮາວານ, ຊຶ່ງມີຜູ້ແທນເຂົ້າຮ່ວມຈາກ 60 ປະເທດ ແລະ 219 ອົງການຈັດຕັ້ງຕ່າງໆໃນຂົງເຂດການຈັດຕັ້ງທາງການເມືອງ, ສະຫະພັນກຳມະບານ ແລະ ຂະບວນການເຄື່ອນໄຫວທາງສັງຄົມ ຈາກຂົງເຂດອາເມລິກາລາຕິນ ແລະ ກາຣິບຽນ. ກອງປະຊຸມດັ່ງກ່າວ ໄດ້ຮຽກຮ້ອງໃຫ້ ສ.ອາເມລິກາ ແລະ ຕາເວັນຕົກ ຢຸດຕິການປິດລ້ອມກູບາທາງດ້ານການເງິນ, ເສດຖະກິດ ແລະ ການຄ້າ ທີ່ແກ່ຍາວມາຫຼາຍກວ່າ 60 ປີ, ສິດທິການດຳລົງຊີວິດຂອງປະຊາຊົນ ວິກິດການຕ່າງໆ ແລະ ການແຜ່ລະບາດຂອງ Covid -19.

ໃນວັນທີ 07-08/5/2022, ທ່ານ Miguel Díaz-Canel Bermúdez ຍັງໄດ້ພົບປະກັບບັນດາຄະນະຜູ້ແທນຂັ້ນສູງຂອງແມັກຊິກໂກ ແລະ ປາແລັສຕິນ ໃນໂອກາດມາຢ້ຽມຢາມ ສ.ກູບາ ຢ່າງເປັນທາງການ. ໃນການປຶກສາຫາລືກັບ ທ່ານ Manuel López Obrador, ປະທານາທິບໍດີແມັກຊິກໂກ, ສອງຝ່າຍໄດ້ເຫັນດີສືບຕໍ່ຮ່ວມມື ແລະ ໄດ້ເຊັນຂໍ້ຕົກລົງຮ່ວມກັນໃນຂົງເຂດການສຶກສາ, ກິລາ, ວັດທະນະທຳ, ສາທາລະນະສຸກ ແລະ ການພັດທະນາຊັບພະຍາກອນມະນຸດ. ສຳລັບການພົບປະ ລະຫວ່າງ ທ່ານ Miguel Díaz ແລະ ທ່ານ Ahmed N.M Assaf, ລັດຖະມົນຕີກະຊວງຄົມມະນາຄົມປາແລັສຕິນ, ສອງຝ່າຍ ເຫັນດີສືບຕໍ່ເພີ່ມທະວີການພົວພັນຮ່ວມມືມິດຕະພາບ ລະຫວ່າງສອງປະເທດ, ຮ່ວມກັນຕໍ່ສູ້ຕ້ານກັບການແຊກແຊງທາງການເມືອງຈາກພາຍນອກ ແລະ ໃຫ້ການສະໜັບສະໜູນເຊິ່ງກັນ ແລະ ກັນໃນເວທີສາກົນ.

ວັນທີ 15/5/2022, ສ.ກູບາ ໄດ້ເປີດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດອຳນາດປະຊາຊົນ ຊຸດທີ 9 ໂດຍການເປັນປະທານຮ່ວມຂອງ ສະຫາຍ Miguel Díaz Canel, ເລຂາທິການທີໜຶ່ງຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດແຫ່ງ ສ.ກູບາ ແລະ ສະຫາຍ Esteban Lazo, ປະທານສະພາແຫ່ງຊາດກູບາ. ກອງປະຊຸມ ໄດ້ຕີລາຄາຜົນຂອງການຈັດຕັ້ງປະບັດຕາມແຜນພັດທະນາເສດຖະກິດ-ສັງຄົມ ໃນໄລຍະ 4 ເດືອນ ຕົ້ນປີ 2022, ການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19, ການເພີ່ມຂຶ້ນຂອງລາຄາສິນຄ້າ, ຍຸດທະສາດດ້ານເສດຖະກິດ-ສັງຄົມ, ຮ່າງກົດໝາຍວ່າດ້ວຍ ອະທິປະໄຕດ້ານສະບຽງອາຫານ, ຄວາມໝັ້ນຄົງດ້ານສະບຽງອາຫານ, ໂຄງການຮ່າງກົດໝາຍຂອງຄະນະກຳມະການລັດຖະທຳມະນູນ ແລະ ກົດໝາຍ, ໂຄງການກົດໝາຍວ່າດ້ວຍ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂອງຄະນະກຳມະການສຶກສາ, ວັດທະນະທຳ, ວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ. ພ້ອມນີ້, ກອງປະຊຸມຍັງໄດ້ພິຈາລະນາຮັບຮອງເອົາບັນດາກົດໝາຍ, ແຜນການ ແລະ ເອກະສານສຳຄັນຕ່າງໆໃນຫຼາຍດ້ານຕື່ມອີກ.

**5). ການເລືອກຕັ້ງທົ່ວໄປຟີລິບປິນ**

ວັນທີ 9/5/2022, ຟີລິບປິນ ໄດ້ດຳເນີນການເລືອກຕັ້ງປະທານາທິບໍດີ ແລະ ຮອງປະທານາທິບໍດີ ໂດຍມີປະຊາຊົນຜູ້ມີສິດປ່ອນບັດທັງໝົດ 65,7 ລ້ານກ່ວາຄົນ; ຜູ້ສະໝັກເລືອກຕັ້ງປະທານາທິບໍດີ ມີ 10 ທ່ານ; ຜູ້ສະໝັກເລືອກຕັ້ງຮອງປະທານາທິບໍດີ 9 ທ່ານ. ຜົນການເລືອກຕັ້ງ, ທ່ານ Bongbong Marcos, ຈາກພັກ Federal Party of the Philippines (PFP), ອະດີດສະມາຊິກສະພາສູງ, ລູກຊາຍກົກອະດີດປະທານາທິບໍດີ Ferdinand Marcos ໄດ້ຮັບໄຊຊະນະດ້ວຍຄະແນນສຽງ 31.311.281 ສຽງ ເທົ່າກັບ 59,02%, ເຊິ່ງຈະໄດ້ດຳລົງຕຳແໜ່ງເປັນປະທານາ

ທິບໍດີຄົນໃໝ່ຂອງຟີລິບປິນ. ສ່ວນ ຄູ່ແຂ່ງຄົນທີສອງ ທ່ານ ນ. Maria Leonor Robredo, ຮອງປະທານາທິບໍດີຟີລິບປິນຄົນປະຈຸບັນ, ຜູ້ສະໝັກເອກະລາດ ໄດ້ຄະແນນ 14.823.932 ສຽງ ເທົ່າກັບ 27,94%; ທ່ານ Manny Pacquiao, ຜູ້ສະໝັກ ຈາກພັກຂະບວນການກ້າວໜ້າ ເພື່ອການພັດທະນາ (PROMDI) ໄດ້ 3.659.314 ສຽງ, ເທົ່າກັບ 6,90%. ສຳລັບການເລືອກຕັ້ງຮອງປະທານາທິບໍດີ ແມ່ນ ທ່ານ ນ. Sara Duterte, ເຈົ້າເມືອງເມືອງ Davao, ລູກສາວ ຂອງ ປະທາ ນາທິບໍດີ Rodrigo Duterte, ໄດ້ຮັບໄຊຊະນະດ້ວຍຄະແນນ 31.624.552, ເທົ່າກັບ 61,27%, ໄດ້ຮັບເລືອກເປັນຮອງປະທານາທິບໍດີຟີລິບປິນຄົນໃໝ່. ພາຍຫຼັງການເລືອກຕັ້ງ, ໄດ້ມີຫຼາຍປະເທດ ສະແດງຄວາມຍິນດີຕໍ່ຜົນການເລືອກຕັ້ງດັ່ງກ່າວ ເປັນຕົ້ນແມ່ນ ອາເມລິກາ, ສປ ຈີນ, ສະຫະພາບເອີລົບ, ອົດສະຕຣາລີ, ຍີ່ປຸ່ນ.

**6). ການເລືອກຕັ້ງທົ່ວໄປ ອົດສະຕຣາລີ**

ການເລືອກຕັ້ງທົ່ວໄປ ຂອງ ອົດສະຕຣາລີ ໄດ້ຈັດຂຶ້ນ ໃນວັນທີ 21 ພຶດສະພາ 2022, ຜູ້ມີສິດປ່ອນບັດເລືອກຕັ້ງ 17 ລ້ານກ່ວາຄົນ ເພື່ອລົງຄະແນນສຽງເລືອກເອົາຜູ້ແທນສະມາຊິກສະພາຕໍ່າ ທັງໝົດ 151 ບ່ອນນັ່ງ ແລະ ສະມາຊິກສະພາສູງ 40 ບ່ອນນັ່ງ ຈາກ 76 ບ່ອນນັ່ງ; ມີ 10 ພັກການເມືອງ ແລະ ຜູ້ສະໝັກເອກະລາດຈຳນວນໜຶ່ງເຂົ້າຮ່ວມ. ຜົນການເລືອກຕັ້ງ, ທ່ານ Anthony A lbanese, ປະທານພັກແຮງງານ ໄດ້ຮັບ 75 ບ່ອນນັ່ງ ທຽບໃສ່ປີ 2016 ໄດ້ພຽງ 67 ບ່ອນນັ່ງ; ທ່ານ Scott Morrison, ປະທານພັກພັກເສລີນິຍົມ, ນາຍົກລັດ ຖະມົນຕີ ຂອງ ອົດສະຕຣາລີ, ເປັນຕົວແທນພັກຮ່ວມລັດຖະບານຊຸດປັດຈຸບັນ ໄດ້ຮັບ 57 ບ່ອນນັ່ງ ຫຼຸດລົງ 18 ບ່ອນນັ່ງ ເມື່ອທຽບໃສ່ການເລືອກຕັ້ງປີ 2016; ທ່ານ Adam Bandt, ຕົວແທນຈາກພັກສີຂຽວ ໄດ້ພຽງ 3 ທີ່ນັ່ງ. ຕາມກົດໝາຍການເລືອກຕັ້ງ ຂອງ ອົດສະຕຣາລີ, ຖ້າພັກໃດ ໄດ້ 71 ທີ່ນັ່ງຂຶ້ນເມືອ ຈະເປັນຜູ້ໄດ້ຮັບໄຊຊະນະ. ດັ່ງນັ້ນ, ທ່ານ Anthony A lbanese ເປັນຜູ້ຊະນະການເລືອກຕັ້ງຄັ້ງນີ້, ເປັນນາຍົກລັດຖະມົນຕີອົດສະຕຣາລີຄົນໃໝ່ ແລະ ຂຶ້ນສາບານຕົນໃນວັນທີ 23 ພຶດສະພາ 2022, ແລະ ໄດ້ມີຄຳເຫັນວ່າ: ຈະຮ່ວມມືກັບທຸກພາກສ່ວນແກ້ໄຂເສດຖະກິດພາຍຫຼັງສະພາບການລະບາດ ຂອງ ພະຍາດ COVID-19, ບັນຫາການປ່ຽນແປງ ຂອງ ດິນຟ້າອາກາດ, ນະໂຍບາຍຄວາມສະເໝີພາບທາງເພດ, ການຮັກສາຄວາມສະຫງົບພາຍໃນປະເທດ ແລະ ອື່ນໆ; ພ້ອມດຽວກັນນັ້ນ ໄດ້ແຕ່ງຕັ້ງ ທ່ານ ນາງ Penny Wong ເປັນລັດຖະມົນຕີຕ່າງປະເທດ. ສ່ວນ ທ່ານ Scott Morrison ໄດ້ສະແດງຄວາມຍິນດີຕໍ່ ທ່ານ Anthony A lbanese ແລະ ຈະລາອອກຈາກການເປັນຫົວໜ້າພັກເສລີນິຍົມ ຕາມປະເພນີທີ່ເຄີຍປະຕິບັດມາ ເພື່ອສະແດງຄວາມຮັບຜິດຊອບ ຕໍ່ການປະລາໄຊຄັ້ງນີ້.

**3. ສະພາບການພາກພື້ນ ແລະ ສາກົນ**

**1) ສະພາບການລະບາດຂອງເຊື້ອພະຍາດ ໂຄວິດ - 19 ໃນທົ່ວໂລກ**

ຕົວເລກຜູ້ຕິດເຊື້ອໂຄວິດ-19 ໃນທົ່ວໂລກ ໃນເດືອນພຶດສະພາ ສືບຕໍ່ຫຼຸດລົງເລື້ອຍໆ, ຫຼາຍປະເທດ ໄດ້ປະກາດເປີດປະເທດຢ່າງເປັນທາງການ ເພື່ອສົ່ງເສີມເສດຖະກິດ ກໍຄືຂະແໜງການທ່ອງທ່ຽວຂອງຕົນ, ຂະນະທີ່ ນັກທ່ອງທ່ຽວ ໄດ້ເລີ່ມເດີນທາງທ່ອງທ່ຽວຕ່າງປະເທດເພີ່ມຂຶ້ນຕາມລຳດັບ. ຮອດວັນທີ 23 ພຶດສະພາ 2022, ຜູ້ຕິດເຊື້ອໂຄວິດ-19 ໃນທົ່ວໂລກ ມີ 527,465,366 ຄົນ, ເສຍຊີວິດ 6,300,195 ຄົນ, ເພີ່ມຂຶ້ນ 55,662, ປິ່ນປົວຫາຍດີ 497,411,792 ຄົນ, ເພີ່ມຂຶ້ນ 34,524,025 ຄົນ, ຈຳນວນຜູ້ຕິດເຊື້ອ ແລະ ເສຍຊີວິດ ຫຼຸດລົງເກືອບເຄິ່ງໜຶ່ງ ຖ້າທຽບໃສ່ເດືອນຜ່ານມາ.

**2) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກກາ**

ວິກິດການເສດຖະກິດໃນສີລັງກາ ຍັງສືບຕໍ່ແກ່ຍາວ, ປະຊາຊົນ ໄດ້ເດີນປະທ້ວງຂັບໄລ່ລັດຖະບານ ສົ່ງຜົນເຮັດໃຫ້ຄະນະລັດຖະບານຕ້ອງລາອອກ ແລະ ມີການແຕ່ງຕັ້ງນາຍົກລັດຖະມົນຕີ ແລະ ຄະນະລັດຖະບານຊຸດໃໝ່ຫຼາຍຄັ້ງ, ເຊິ່ງຄັ້ງຫຼ້າສຸດ ໃນວັນທີ 12/5/2022, ທ່ານ Gotabaya Rajapaksa, ປະທານາທິບໍດີສີລັງກາ ໄດ້ປະກາດ

ແຕ່ງຕັ້ງ ທ່ານ Ranil Wickremesighe ເປັນນາຍົກລັດຖະມົນຕີຄືນໃໝ່ຂອງສີລັງກາ, ຊຶ່ງ ທ່ານ Ranil ເຄີຍດຳລົງຕຳແໜ່ງນາຍົກລັດຖະມົນຕີສີລັງກາມາແລ້ວ 5 ສະໄໝ ແລະ ການໄດ້ຮັບແຕ່ງຄືນໃໝ່ນີ້ ເພື່ອການບໍລິຫານແກ້ໄຂບັນຫາວິກິດການທາງດ້ານການເມືອງ ແລະ ເສດຖະກິດຂອງສີລັງກາ ທີ່ກຳລັງໄດ້ຮັບຜົນກະທົບລວມຈາກເສດຖະກິດໂລກໃນປະຈຸບັນ; ພ້ອມນັ້ນ ຍັງໄດ້ແຕ່ງຕັ້ງລັດຖະມົນຕີຄືນໃໝ່ 4 ທ່ານ ເຊັ່ນ: ລັດຖະມົນຕີກະຊວງການຕ່າງປະເທດ, ລັດຖະມົນຕີກະຊວງບໍລິຫານສາທາລະນະ, ລັດຖະມົນຕີກະຊວງພັດທະນາຕົວເມືອງ ແລະ ລັດຖະມົນຕີກະຊວງພະລັງງານ.

ນາຍົກລັດຖະມົນຕີຍີ່ປຸ່ນ ຢ້ຽມຢາມ ແລະ ພົບປະ ກັບຜູ້ນຳ 03 ປະເທດສະມາຊິກອາຊຽນ ຄື: ອິນໂດເນເຊຍ, ສສ ຫວຽດນາມ ແລະ ໄທ, ແຕ່ວັນທີ 29/04 – 02/05/2022 ຕາມລຳດັບ. ການຢ້ຽມຢາມ ໂດຍລວມ ແມ່ນເພື່ອເພີ່ມທະວີສາຍພົວພັນມິດຕະພາບ ແລະ ການຮ່ວມມືກັບອາຊຽນ ທາງດ້ານເສດຖະກິດ, ການປ້ອງກັນການລະບາດຂອງ ພະຍາດ COVID-19, ບັນຫາໄພພິບັດທາງທຳມະຊາດ, ຄວາມສະຫງົບໃນພາກພື້ນ ແລະ ອື່ນໆ. ໃນການພົບປະກັບປະທານາທິບໍດີອິນໂດເນເຊຍ, ແມ່ນໄດ້ແລກປ່ຽນກ່ຽວກັບການເສີມຂະຫຍາຍການເປັນຄູ່ຮ່ວມຍຸດທະສາດລະຫວ່າງສອງປະເທດ, ການເປັນເຈົ້າພາບຈັດກອງປະຊຸມກຸ່ມ G20; ພົບປະກັບນາຍົກລັດຖະມົນຕີຫວຽດນາມ, ຍີ່ປຸ່ນຈະໃຫ້ເງິນຊ່ວຍເຫຼືອແກ່ ສສ ຫວຽດນາມ ຈຳນວນ 146 ລ້ານໂດລາ ເພື່ອນຳໃຊ້ໃນວຽກງານຕ້ານໄພພິບັດ; ພົບປະກັບນາຍົກໄທ, ສອງຝ່າຍໄດ້ປຶກສາຫາລື 4 ບັນຫາ ຄື: 1. ສະເໜີຍີ່ປຸ່ນ ຕໍ່ຍອດການລົງທຶນດ້ານອຸດສາຫະກຳໄຟຟ້າໃນໄທ; 2. ສ້າງເມືອງສູນກາງສຸຂະພາບຮອງຮັບຜູ້ສູງອາຍຸ; 3. ການລົງທຶນໃນປະຊາຄົມເສດຖະກິດອາຊຽນ (AEC) ໂດຍສະເພາະດ້ານໂຄງລ່າງພື້ນຖານ, ສ້າງເມືອງທັນສະໄໝ; 4. ຮ່ວມມືດ້ານພະລັງງານແສງອາທິດ.

ກອງປະຊຸມສຸດຍອດອາຊຽນ-ອາເມລິກາ ສະໄໝພິເສດຄັ້ງທີ 2 ໄດ້ຈັດຂຶ້ນໃນວັນທີ 12-13/5/2022 ທີ່ນະຄອນ ຫຼວງວໍຊິງຕັນ, ສ.ອາເມລິກາ ເພື່ອສະເຫຼີມສະຫຼອງການພົວພັນອາຊຽນ-ສ.ອາເມລິກາ ຄົບຮອບ 45 ປີ ນັບແຕ່ສອງຝ່າຍໄດ້ສ້າງຕັ້ງສາຍພົວພັນຄູ່ເຈລະຈານຳກັນ ໃນປີ 1977 ເປັນຕົ້ນມາ. ບັນດາຜູ້ນຳ ແລະ ຜູ້ຕາງໜ້າຈາກປະເທດສະມາຊິກອາຊຽນ ແລະ ຜູ້ນຳອາເມລິກາ ໄດ້ຢັ້ງຢືນຄືນການພົວພັນອາຊຽນ - ອາເມລິກາ ໃນໄລຍະຜ່ານມາ ແລະ ປຶກສາຫາລືກ່ຽວກັບການຮ່ວມມືໃນຕໍ່ໜ້າ; ປະທານາທິບໍດີອາເມລິກາ ໄດ້ປະກາດແຕ່ງຕັ້ງ ທ່ານ Yohannes Abraham, ຮອງຜູ້ຊ່ວຍປະທານາທິບໍດີ ທັງເປັນເລຂາຂັ້ນສູງ ຂອງ ສະພາຄວາມໝັ້ນຄົງແຫ່ງຊາດອາເມລິກາ ເປັນທູດປະຈຳອາຊຽນຄົນໃໝ່. ອາຊຽນ ແລະ ອາເມລິກາ ໄດ້ແລກປ່ຽນຄຳຄິດຄຳເຫັນໃນຫຼາຍບັນຫາ ເປັນຕົ້ນ ການສົ່ງເສີມການຄ້າການລົງທຶນ ແລະ ການພັດທະນາເສດຖະກິດຂອງອາຊຽນ; ການພັດທະນາພື້ນຖານໂຄງລ່າງ; ການຮ່ວມມືດ້ານເຕັກໂນໂລຊີ; ດ້ານການສຶກສາ, ສາທາລະນະສຸກ; ບັນຫາດິນຟ້າອາກາດ, ຊຶ່ງ ອາຊຽນ ແລະ ອາເມລິກາ ຢ້ຳຄືນການປະຕິບັດພັນທະຂອງຕົນ ພາຍໃຕ້ສົນທິສັນຍາປາຣີ ວ່າດ້ວຍການປ່ຽນແປງດິນຟ້າອາກາດ ແລະ ອື່ນໆ; ອາເມລິກາໄດ້ແຈ້ງຈະໃຫ້ທຶນປະມານ 150 ລ້ານ ໂດລາສະຫະລັດ ເພື່ອເສີມຂະຫຍາຍບັນດາຂອບການຮ່ວມມືດັ່ງກ່າວກັບອາຊຽນ. ນອກຈາກນັ້ນ, ຍັງໄດ້ແລກປ່ຽນທັດສະນະກ່ຽວກັບບັນຫາພາກພື້ນ ແລະ ສາກົນທີ່ພົ້ນເດັ່ນ ເປັນຕົ້ນ ແມ່ນສະຖານະການໃນອູແກຣນ. ກອງປະຊຸມສຸດຍອດສະໄໝພິເສດຄັ້ງນີ້, ຜູ້ນຳອາຊຽນ ແລະ ຜູ້ນຳອາເມລິກາ ໄດ້ເຫັນດີໃນດ້ານຫຼັກຕໍ່ການຍົກລະດັບການພົວພັນອາຊຽນ-ອາເມລິກາ ຂຶ້ນເປັນຄູ່ຮ່ວມຍຸດທະສາດຮອບດ້ານ (Comprehensive Strategic Partnership – CSP), ເຊິ່ງຈະຮັບຮອງຢ່າງເປັນທາງການໃນໂອກາດກອງປະຊຸມສຸດຍອດອາຊຽນ-ອາເມລິກາ ຄັ້ງທີ 10 ທີ່ຈະຈັດຂຶ້ນໃນ ເດືອນ ພະຈິກ 2022 ທີ່ ກຳປູເຈຍ; ຮັບຮອງເອົາຖະແຫຼງການວິໄສທັດຮ່ວມອາຊຽນ-ສ.ອາເມລິກາ ເພື່ອເປັນພື້ນຖານໃຫ້ແກ່ການຮ່ວມມືໃນຕໍ່ໜ້າ.

ກອງປະຊຸມລັດຖະມົນຕີຕ່າງປະເທດຂອງກຸ່ມ BRICS (ກຸ່ມປະເທດເສດຖະກິດໃໝ່) ເຊິ່ງປະກອບມີປະເທດເບຣຊິນ, ລັດເຊຍ, ອິນເດຍ, ຈີນ ແລະ ອາຟຣິກາໃຕ້ ໄດ້ຈັດຂຶ້ນໃນຮູບແບບທາງໄກ ໃນວັນທີ 19 ພຶດສະພາ 2022 ຜ່ານມາ, ໄດ້ເຊີນ 9 ປະເທດເຂົ້າຮ່ວມ ຄື: ອາກຊັງຕິນ, ອີຢິບ, ອິນໂດເນເຊຍ, ກາຊັກສະຖານ, ນີເຊຣີ, ຊາອຸດີ ອາຣາ

ບີ, ສະຫະນະຄອນ ເອເມຣັດ ອາຣັບ ແລະ ໄທ. ທ່ານ ສີ ຈິ້ນຜິງ, ປະທານປະເທດ ສປ ຈີນ ໄດ້ຮຽກຮ້ອງໃຫ້ສະມາຊິກກຸ່ມ BRICS ມີຄວາມເຊື່ອໝັ້ນທາງດ້ານການເມືອງ, ຕ້ານແນວຄິດສົ່ງຄາມເຢັນ, ຮ່ວມກັນສົ່ງເສີມສັນຕິພາບໃນພາກພື້ນ ແລະ ສາກົນ, ຮ່ວມກັນພັດທະນາໃຫ້ເຂັ້ມແຂງ ເພື່ອສ້າງປະຊາຄົມແຫ່ງມວນມະນຸດໄປພ້ອມກັນ. ສ່ວນລັດຖະມົນຕີຕ່າງປະເທດ ສປ ຈີນ ໄດ້ກ່າວວ່າ ກຸ່ມ BRICS ຍິນດີຮັບສະມາຊິກໃໝ່ ເພື່ອເຮັດບົດບາດຂອງບັນດາປະເທດເສດຖະກິດໃໝ່ ພົ້ນເດັ່ນຂຶ້ນໃນເວທີສາກົນ.

**3). ສະພາບການ ໃນຂົງເຂດເອີຣົບ-ອາເມຣິກາ**

ສະຖານະການໃນອູແກຣນ ຍັງສືບຕໍ່ເຄັ່ງຕຶງ, ໂດຍສະເພາະແມ່ນການປະຕິບັດການທາງທະຫານຂອງລັດເຊຍປິດລ້ອມໂຮງງານເຫຼັກ Azovstal, ເມືອງ Mariulpol ເປັນເວລາຫລາຍອາທິດ, ໃນທີ່ສຸດ ຜູ້ນຳທັບອູແກຣນ ໄດ້ສັ່ງໃຫ້ກຳລັງປະກອບອາວຸດ ຂອງຕົນ ແລະ ທະຫານຮັບຈ້າງ ໃນໂຮງງານດັ່ງກ່າວ ຈຳນວນ 2439 ຄົນ ວາງອາວຸດ ອອກມາຍອມຈຳນົນຕໍ່ລັດເຊຍ. ການປະຕິບັດການຢູ່ເມືອງ Mariulpol ເປັນສ່ວນໜຶ່ງ ຂອງ ການປົດປ່ອຍເຂດ Donbas.

ວັນທີ 9 ພຶດສະພາ 2022, ລັດເຊຍ ໄດ້ຈັດພິທີສວນສະໜາມ ເພື່ອລະນຶກເຖິງໄຊຊະນະຕໍ່ນາຊີເຢຍລະມັນ ໃນສົງຄາມໂລກ ຄັ້ງທີ 2 ຄົບຮອບ 77 ປີ (9/5/1945 – 9/5/022) ທີ່ ຈະຕຸລັດແດງ, ນະຄອນຫຼວງມົດສະກູ ໂດຍມີການສວນສະໜາມຂອງທະຫານ ປະມານ 11.000 ຄົນ ແລະ ລົດຫຸ້ມເກາະ ຫຼາຍກວ່າ 130 ຄັນ, ລົດຖັງສູ້ຮົບ T-90M Proryv, ລະບົບລູກສອນໄຟປ້ອງກັນທາງອາກາດ S 400, ລູກສອນໄຟນຳວິຖີຂ້າມທະວີບ Yars ແລະ ອາວຸດຍຸດໂທປະກອນ ຫຼາຍກວ່າ 2.400 ຊະນິດ. ໃນໂອກາດດັ່ງກ່າວ, ທ່ານ Vladimir Putin, ປະທານາທິບໍດີລັດເຊຍ ໄດ້ກ່າວວ່າ: ຄວາມເຄັ່ງຕຶງລະຫວ່າງ ລັດເຊຍ ກັບ ສ.ອາເມລິກາ, NATO ແລະ ຕາເວັນຕົກ ໄດ້ທະວີຄວາມຮຸນແຮງຂຶ້ນນັບແຕ່ປີ 2021 ເປັນຕົ້ນມາ, ຊຶ່ງຕະຫຼອດໄລຍະຜ່ານມາ ລັດເຊຍ ໄດ້ເຕືອນພວກເຂົາ ເພື່ອຫຼຸດຜ່ອນການປະເຊີນໜ້າ, ແຕ່ ສ.ອາເມລິກາ, NATO ແລະ ຕາເວັນຕົກ ບໍ່ເຄີຍທີ່ຈະສົນໃຈໃນຄຳເຕືອນດັ່ງກ່າວ ຊໍ້າພັດຍິ່ງເພີ່ມທະວີການເຄື່ອນກຳລັງທະຫານ ແລະ ອາວຸດຍັບເຂົ້າມາໃກ້ລັດເຊຍເລື້ອຍໆ, ຈົນກາຍເປັນໄພຄຸກຄາມທີ່ຮ້າຍແຮງກັບ ລັດເຊຍ. ທ່ານ Putin ໄດ້ຢໍ້າວ່າ ການສົ່ງກຳລັງທະຫານເຂົ້າໄປອູແກຣນ ໃນຊ່ວງເວລາທີ່ເໝາະສົມ ແລະ ທັນການ, ເປັນການຕັດສິນໃຈທີ່ຖືກຕ້ອງຕາມແນວທາງປະເທດເອກະລາດ, ເຂັ້ມແຂງ ແລະ ອະທິປະໄຕຂອງລັດເຊຍ ກ່ອນທີ່ NATO ຈະຮຸກຮານລັດເຊຍ.

ໃນຂະນະທີ່ ສ.ອາເມລິກາ ແລະ ພັນທະມິດຕາເວັນຕົກ ກໍ່ຄືກຸ່ມ NATO ຍັງສືບຕໍ່ປະຕິບັດມາດຕະການຕໍ່ລັດເຊຍ ແລະ ໃຫ້ການຊ່ວຍເຫຼືອອູແກຣນ ຢ່າງຕໍ່ເນື່ອງ, ປະທານາທິບໍດີ ສ.ອາເມລິກາ Joe Biden ໄດ້ປະກາດເພີ່ມການສົ່ງອາວຸດໃຫ້ ອູແກຣນ ຊຶ່ງປະກອບດ້ວຍຣາດາຕໍ່ຕ້ານປືນໃຫຍ່, ອຸປະກອນລົບກວນສັນຍານເອເລັກໂຕນິກ ແລະລູກປືນໃຫຍ່ 25.000 ລູກ; ວັນທີ 20 ພຶດສະພາ 2022, ສະພາຄອນແກຣສ ຂອງອາເມລິກາ (United States Congress) ຍັງໄດ້ຮັບຮອງເອົາການສະເໜີງົບປະມານຂອງ ທ່ານ Joe Biden ມູນຄ່າ 40 ຕື້ໂດລາສະຫະລັດ ເພື່ອສືບຕໍ່ຊ່ວຍເຫຼືອທາງດ້ານການທະຫານ, ເສດຖະກິດ ແລະມະນຸດສະທຳແກ່ອູແກຣນ, ລວມມູນຄ່າທີ່ ສ.ອາເມລິກາ ໄດ້ຊ່ວຍເຫຼືອ ອູແກຣນ ທັງໝົດ ສູງເຖິງ 43,8 ຕື້ໂດລາສະຫະລັດ; ອາເມລິກາ ຍັງຮັບຮອງກົດໝາຍວ່າ ດ້ວຍການໃຫ້ຢືມໃຫ້ເຊົ່າ ເພື່ອສະໜັບສະໜູນອູແກຣນໃນການປ້ອງກັນປະເທດ, ພ້ອມທັງປະກາດການຂວ້ຳບາດຮອບໃໝ່ຕໍ່ລັດເຊຍໂດຍແນໃສ່ຜູ້ບໍລິຫານ Gazprombank, ຊຶ່ງເປັນບໍລິສັດສົ່ງອອກແກັສທຳມະຊາດລາຍໃຫຍ່ຂອງລັດເຊຍ, ສະຖານີໂທລະພາບລັດເຊຍ 3 ແຫ່ງ ແລະ ຈຳກັດການອອກວີຊາໃຫ້ແກ່ເຈົ້າໜ້າທີ່ລັດເຊຍ ແລະ ເບລາລຸດຊີ ຫຼາຍກວ່າ 2,000 ຄົນ, ປະກາດຍຶດຊັບສິນຂອງນາຍົກລັດຖະມົນຕີລັດເຊຍ, ຮອງເລຂາທິການສະພາຄວາມໝັ້ນຄົງ, ຜູ້ນຳສາທາລະລັດປະຊາຊົນລູຮ້ານ (Luhansk People's Republic) ແລະ ຜູ້ນຳ ສາທາລະນະລັດ ປະຊາຊົນດອນເບັສ (Donetsk People's Republic) ແລະ ບຸກຄົນອື່ນໆ ທີ່ກ່ຽວຂ້ອງ ຈຳນວນ 130 ຄົນ. ສ່ວນອັງກິດ ໄດ້ປະກາດສະໜອງເງິນຊ່ວຍເຫຼືອອີກ 1,3 ລ້ານປອນ ໃຫ້ແກ່ ອູແກຣນ. ຂະນະດຽວກັນ ກອງປະຊຸມທາງໄກຂອງ ບັນດາປະເທດກຸ່ມ G7 ໃນວັນທີ 9/5/2022 ໂດຍການເຂົ້າຮ່ວມຂອງທ່ານ Volodymyr Zelensky, ປະທານາທິບໍດີ ອູແກຣນ, ກຸ່ມ G7 ໄດ້ເຫັນດີຮ່ວມກັນສືບຕໍ່ຂວ້ຳບາດລັດເຊຍ ດ້ວຍການຫຼຸດການນຳເຂົ້ານ້ຳມັນ ຈາກລັດເຊຍ ແລະ ກ້າວໄປເຖິງການບໍ່ນຳເຂົ້າ ໃນອະນາຄົດ, ແຕ່ສະມາຊິກ EU ຍັງບໍ່ສາມາດຕົກລົງກັນໄດ້ໂດຍສະເພາະ ຮົງກາລີ, ສະໂລວາກີ ແລະສາທາລະນະລັດເຊັກ ຍັງຕ້ອງການເພິ່ງພາຈາກລັດເຊຍ. ກຸ່ມ NATO ຍັງຈະສືບຕໍ່ຂະຫຍາຍສະມາຊິກຂອງຕົນ ຫລັງ

ປິດລ້ອມລັດເຊຍ, ໃນວັນທີ 18 ພຶດສະພາ 2022, ແຟັງລັງ ແລະ ຊູແອັດ ໄດ້ສະໝັກເຂົ້າເປັນສະມາຊິກ NATO ຢ່າງເປັນທາງການ, ແຕ່ປະທານາທິບໍດີຕວັກກີ ທ່ານ Recep Tayyip Erdogan ໄດ້ຄັດຄ້ານບໍ່ຮັບສອງປະເທດດັ່ງກ່າວ ໂດຍໃຫ້ເຫດຜົນວ່າ ແຟັງລັງ ແລະ ຊູເອັດ ເຄີຍສະໜັບະໜູນພັກການເມືອງ Kurdistan Workers' Party (PKK) ທີ່ເປັນກຸ່ມກໍ່ການຮ້າຍ ແລະ ໄດ້ສ້າງຄວາມວຸ້ນວາຍຕໍ່ຕວັກກີ ໃນໄລຍະຜ່ານມາ. ສ່ວນປະທານາທິບໍດີລັດເຊຍ ທ່ານ ປູຕິນ ໄດ້ມີຄໍາເຫັນຢ່າງແຂງແຮງວ່າ: ການເຂົ້າເປັນສະມາຊິກ NATO ຂອງ ສອງປະເທດດັ່ງກ່າວ ກໍ່ຄືກຸ່ມ NATO ຫາກສ້າງບັນຫາກະທົບຕໍ່ຄວາມໝັ້ນຄົງ ຂອງ ລັດເຊຍ ແມ່ນຈະຖືກຕອບໂຕ້ໃນທຸກຮູບແບບ ທັງດ້ວຍກໍາລັງອາວຸດ ແລະ ອື່ນໆ. ປະທານາທິບໍດີ Vladimir Putin ຍັງໄດ້ສົນທະນາທາງໂທລະສັບກັບ ທ່ານ Sauli Niinisto, ປະທານາທິບໍດີແຟັງລັງ ແລະ ໄດ້ກ່າວວ່າ ຜ່ານມາ ແຟັງລັງ ສະແດງຄວາມເປັນກາງທາງດ້ານການທະຫານມາໂດຍຕະຫຼອດ, ແຕ່ມາເຖິງປັດຈຸບັນ ໄດ້ປະຖິ້ມນະໂຍບາຍດັ້ງເດີມຂອງຕົນ, ການກະທໍາດັ່ງກ່າວຈະກາຍເປັນຄວາມຜິດພາດອັນໃຫຍ່ຫຼວງຂອງແຟັງລັງ ແລະ ຊູເອັດ. ຫຼ້າສຸດ ລັດເຊຍ ໄດ້ຕັດການສົ່ງພະລັງງານໄຟຟ້າ ແລະ ພະລັງງານ ໄປຍັງແຟັງລັງ ເພື່ອຕອບໂຕ້ການກະທໍາດັ່ງກ່າວຂອງແຟັງລັງ.

ແນວໃດກໍຕາມ, ຕໍ່ມາດຕະການຈະບໍ່ນໍາເຂົ້າພະລັງງານຈາກລັດເຊຍ ຂອງ ສະຫະພາບເອີຣົບ, ຍັງມີຫຼາຍປະເທດທີ່ໃຫ້ຄວາມສົນໃຈຊື້ພະລັງງານຈາກລັດເຊຍ ເຊັ່ນ ບໍລິສັດອັນດັບໜຶ່ງຂອງອິນເດຍ (IOC) ໄດ້ຊື້ນໍ້າມັນດິບ ເກຼດອູຣາລ (Urals( 700,000 ໂຕນ ຈາກລັດເຊຍ ແລະ ຍັງມີຫຼາຍປະເທດໃນອາຊີ ມີແຜນຊື້ນໍ້າມັນຈາກລັດເຊຍຕື່ມອີກ. ນອກຈາກນັ້ນ, ມີອີກ 54 ບໍລິສັດ ທີ່ສັ່ງຊື້ແກັສທໍາມະຊາດຈາກລັດເຊຍ, ເຊິ່ງບໍລິສັດດັ່ງກ່າວນີ້ ເກີນເຄິ່ງໜຶ່ງແລ້ວ ທີ່ໄດ້ເປີດບັນຊີສະກຸນເງິນຣູບ ເພື່ອຊໍາລະຄ່າແກັສດັ່ງກ່າວ ຕາມເງື່ອນໄຂຂອງລັດເຊຍ.

ຂະນະທີ່ ກຸ່ມຜູ້ສົ່ງອອກນໍ້າມັນ (OPEC) ໄດ້ລາຍງານວ່າ ເສດຖະກິດໂລກມີທ່າອ່ຽງຂະຫຍາຍຕົວ 3,5% ໃນປີນີ້ ຫຼຸດລົງຈາກ 3,9% ທີ່ຄາດການໄວ້ໃນເບື້ອງຕົ້ນ ເນື່ອງຈາກຜົນກະທົບຈາກຄວາມເຄັ່ງຕຶງທາງດ້ານການເມືອງ ໂດຍສະເພາະບັນຫາໃນອູແກຣນ, ການແຜ່ລະບາດຂອງ COVID-19, ອັດຕາເງິນເຟີ້ທີ່ເພີ່ມສູງຂຶ້ນ, ໜີ້ສາທາລະນະໃນຫຼາຍພາກພື້ນຢູ່ໃນລະດັບສູງ ແລະ ທະນາຄານກາງໃນຫຼາຍປະເທດຄຸມເຂັ້ມນະໂຍບາຍການເງິນ. ນອກນີ້, ກຸ່ມ OPEC ຍັງກ່າວວ່າ ຄວາມຕ້ອງການໃຊ້ນໍ້າມັນທົ່ວໂລກຂອງປີນີ້ ຈະເພີ່ມຂຶ້ນ 3,4 ລ້ານຖັງ/ວັນ, ຊຶ່ງສວນທາງກັບກໍາລັງການຜະລິດທີ່ຫຼຸດລົງ.

**4) ສະພາບການໃນຂົງເຂດຕາເວັນອອກກາງ**

ວັນທີ 08 ພຶດສະພາ 2022, ທ່ານ Bashar Al-Assad, ປະທານາທິບໍດີຊີຣີ ໄດ້ຢ້ຽມຢາມອີຣານ, ເຊິ່ງໄດ້ພົບກັບ ທ່ານ Ayatollah Ali Khamenei, ຜູ້ນໍາທາງສາສະໜາ ແລະ ເປັນຜູ້ນໍາສູງສຸດຂອງອີຣານ ໂດຍທ່ານ Ayatollah Ali Khamenei ໄດ້ກ່າວວ່າ ຊີຣີ ແລະ ອີຣານ ຄວນເພີ່ມທະວີການຮ່ວມມືທີ່ດີຂຶ້ນກວ່າເກົ່າ ເພາະວ່າການພົວພັນທີ່ດີ ແລະ ສ້າງສາຍພົວພັນທີ່ເຂັ້ມແຂງລະຫວ່າງກັນ ມີຄວາມສໍາຄັນຕໍ່ສອງປະເທດ; ສ່ວນການພົບກັບທ່ານ Embrahim Raisi, ປະທານາທິບໍດີອີຣານ, ທ່ານ Raisi ໄດ້ກ່າວວ່າ ໄພຄຸກຄາມຈາກອິດສະລາແອນ ເປັນສິ່ງທີ່ຈະຕ້ອງໄດ້ໃຫ້ຄວາມສໍາຄັນ; ຊີຣີ ແລະ ອີຣານ ຕ້ອງຮ່ວມມືກັນໃຫ້ແໜ້ນແຟ້ນ ທັງດ້ານການເມືອງ, ຄວາມໝັ້ນຄົງ ແລະ ເສດຖະກິດ ເພື່ອຄວາມເຂັ້ມແຂງ ແລະ ຄວາມກຽມພ້ອມຮັບມືກັບໄພຄຸກຄາມຕ່າງໆ ລວມທັງການກໍ່ການຮ້າຍ.

**ແຫຼ່ງຂ່າວອ້າງອີງ** :Vietnam News, Vietnam- Express, VNS, Xinhua, CNA, Global Times, Yonhap, Rodong, The Guardian, CRI, Khmer Times, Aljazeera, RT, Kpl, Lao National Radio, Sputnik, Yonhap, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, ສະຖານທູດລາວ ຢູ່ລັດເຊຍ, ຟີລິບປິນ…

# II. ການເຄື່ອນໄຫວວຽກງານ ຂອງການນຳພັກ ປປ ລາວ

## ຄະນະບໍລິຫານງານສູນກາງພັກ ປປ ລາວ ສົ່ງສານສະແດງຄວາມເຫັນໃຈ ຕໍ່ເຫດແກັດລະເບີດ ໃນໂຮງແຮມຊາຣາໂຕກາ ຢູ່ກູບາ

ໃນວັນທີ 10 ພຶດສະພາ 2022, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ສົ່ງໂທລະເລກ ເຖິງ ສະຫາຍ ມີເກັນ ດີເອັດສ-ການແນນ ແບຣມູເດັດສ, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດ ແຫ່ງ ສາທາລະນະລັດກູບາ ເພື່ອສະແດງຄວາມເສຍໃຈ ຕໍ່ເຫດແກັດລະເບີດໃນໂຮງແຮມຊາຣາໂຕກາ ທີ່ນະຄອນຫຼວງລາຮາວານ, ສ. ກູບາ ໃນວັນທີ 6 ພຶດສະພາ 2022 ຜ່ານມາ ໂດຍມີເນື້ອໃນວ່າ: ຂ້າພະເຈົ້າ ມີຄວາມເສົ້າສະຫຼົດໃຈເປັນຢ່າງຍິ່ງ ທີ່ໄດ້ຮັບຂ່າວ ອຸບັດຕິເຫດແກັດລະເບີດໃນໂຮງແຮມຊາຣາໂຕກາ ທີ່ນະຄອນຫຼວງລາຮາວານ ວັນທີ 6 ພຶດສະພາ ຜ່ານມາ, ຊຶ່ງເປັນເຫດການສະເທືອນໃຈ ແລະ ສ້າງຄວາມເສຍຫາຍອັນໃຫຍ່ຫຼວງຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນກູບາອ້າຍນ້ອງ.

ໃນນາມ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ລັດຖະບານ ແລະ ປະຊາຊົນລາວ ກໍ່ຄືໃນນາມສ່ວນຕົວ ຂ້າພະເຈົ້າ ຂໍສະແດງຄວາມເຫັນອົກເຫັນໃຈຢ່າງສຸດຊຶ້ງ ແລະ ຂໍແບ່ງເບົາຄວາມເສົ້າໂສກເສຍໃຈ ມາຍັງສະຫາຍ ແລະ ຜ່ານສະຫາຍໄປຍັງ ພັກ, ລັດຖະບານ, ປະຊາຊົນກູບາອ້າຍນ້ອງ ແລະ ຄອບຄົວຂອງຜູ້ທີ່ໄດ້ຮັບເຄາະຮ້າຍຈາກເຫດການດັ່ງກ່າວ. ຂ້າພະເຈົ້າເຊື່ອໝັ້ນວ່າ ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງສະຫາຍ, ພັກ, ລັດຖະບານ ແລະ ປະຊາຊົນກູບາອ້າຍນ້ອງ ຈະສາມາດຜ່ານຜ່າຄວາມຫຍຸ້ງຍາກທີ່ເກີດຂຶ້ນຈາກເຫດການຄັ້ງນີ້ ແລະ ຟື້ນຟູເຂດທີ່ໄດ້ຮັບຜົນກະທົບໃຫ້ກັບຄືນສູ່ສະພາບປົກກະຕິໂດຍໄວ.

# II. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

## 1. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ເອກອັກຄະລັດຖະທູດ ສ.ກູບາ ຄົນໃໝ່



ວັນທີ 26 ເມສາ 2022, ທີ່ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນ ປປ ລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ສະຫາຍ ນ. ເອັກນາ ເວຍ ວາລເດດສ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ.ກູບາ ປະຈຳ ສປປ ລາວ ໃນໂອກາດທີ່ມາຮັບໜ້າທີ່ໃໝ່ຢູ່ ສປປ ລາວ.

ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຊົມເຊີຍ ສະຫາຍ ນ. ເອັກນາ ເວຍ ວາລເດດສ ທີ່ໄດ້ຮັບມອບໝາຍໜ້າທີ່ເປັນເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ.ກູບາ ປະຈຳ ສປປ ລາວ ຄົນໃໝ່; ຕີລາຄາສູງຕໍ່ການພົວພັນ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສປປ ລາວ ແລະ ສ. ກູບາ ກໍ່ຄື ລະຫວ່າງ ພັກປະຊາຊົນປະຕິວັດລາວ ແລະ ພັກກອມມູນິດກູບາ ທີ່ນັບມື້ໄດ້ຮັບການເສີມຂະຫຍາຍ ແລະ ແໜ້ນແຟ້ນຍິ່ງໆຂຶ້ນ, ສະແດງຄວາມເຊື່ອໝັ້ນວ່າ ສະຫາຍ ເອກອັກຄະລັດຖະທູດຄົນໃໝ່ ຈະສືບຕໍ່ໃຫ້ການຮ່ວມມື ແລະ ປະສານສົມທົບຢ່າງແໜ້ນແຟ້ນ ກັບ ຄະນະພົວພັນຕ່າງປະເທດສູນກາງພັກ ໃນການປະຕິບັດໜ້າທີ່ເປັນຂົວຕໍ່ປະສານງານ ລະຫວ່າງ ພັກ, ລັດ ຂອງສອງປະເທດ ກູບາ-ລາວ ເວົ້າລວມ, ເວົ້າສະເພາະ ລະຫວ່າງ ບັນດາອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງມະຫາຊົນຂອງລາວ ແລະ ກູບາ ເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ລະຫວ່າງ ສອງປະເທດ ກໍ່ຄື ລະຫວ່າງ ປະຊາຊົນສອງຊາດ ລາວ-ກູບາ ໃຫ້ນັບມື້ນັບເລິກເຊິ່ງ ແລະ ມີປະສິດທິຜົນ ຍິ່ງໆຂຶ້ນ.

## 2. ຫົວໜ້າ ຄຕພ ຕີລາຄາສູງຕໍ່ການຮ່ວມມືຮອບດ້ານ ລາວ-ຫວຽດນາມ



ໃນໂອກາດກຽມສະເຫຼີມສະຫຼອງ ປີສາມັກຄີມິດຕະພາບ ລາວ-ຫວຽດນາມ, ຫວຽດນາມ-ລາວ 2022, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນໃນວັນທີ 17 ພຶດສະພາ 2022 ໂດຍໄດ້ຕີລາຄາສູງ ຕໍ່ສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ກໍຄື ການຊ່ວຍເຫລືອ ເຊິ່ງກັນ ແລະ ກັນ ໃນໄລຍະຜ່ານມາ ຈົນເຖິງປັດຈຸບັນ.

ສປປ ລາວ ແລະ ສສ ຫວຽດ ນາມ ເປັນປະເທດບ້ານໃກ້ເຮືອນຄຽງ ທີ່ຕິດພັນກັນທາງດ້ານພູມສາດ ແລະ ປະຫວັດສາດ, ມີສາຍນ້ຳ, ສາຍພູຕິດຈອດກັນ, ປະຊາຊົນສອງປະເທດ ມີການພົວພັນອັນສະໜິດສະໜົມ ເປັນຕົ້ນ ໃນໄລຍະຕໍ່ສູ້ກູ້ຊາດ ຂອງ ສອງປະເທດ ລາວ-ຫວຽດນາມ ພາຍໃຕ້ການນຳພາຊີ້ນຳ ຂອງ ພັກກອມມູນິດອິນດູຈີນ ທີ່ໄດ້ສ້າງຕັ້ງຂຶ້ນໃນປີ 1930, ເຊິ່ງເປັນຕົ້ນກຳເນີດ ຂອງ ພັກກອມມູນິດຫວຽດນາມ ແລະ ພັກປະຊາຊົນ ປະຕິວັດລາວ, ສອງຊາດ ລາວ ແລະ ຫວຽດນາມ ໄດ້ຜູກແໜ້ນຄວາມສາມັກຄີ ແລະ ຮ່ວມສຳພັນສູ້ຮົບ, ຄຽງບ່າຄຽງໄຫຼ່ໃນການຕໍ່ສູ້ຕ້ານສັດຕູໂຕດຽວກັນ ຢ່າງດຸເດືອດຂ້ຽວຂາດ, ຍືດເຍື້ອຍາວນານ ແລະ ເຕັມໄປດ້ວຍການເສຍສະຫຼະອັນສູງສົ່ງ ເພື່ອປົດປ່ອຍຊາດ ອອກຈາກແອກປົກຄອງ ຂອງພວກຈັກກະພັດລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່ ຈົນຍາດໄດ້ໄຊຊະນະຢ່າງສົມບູນ ໃນປີ 1975.

ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໄດ້ສືບຕໍ່ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອແຫ່ງສາຍພົວພັນມິດຕະພາບ ຈົນກາຍເປັນມໍລະດົກລວມອັນລ້ຳຄ່າ, ເປັນກົດເກນແຫ່ງການຄົງຕົວ, ຂະຫຍາຍຕົວ ແລະ ເປັນໜຶ່ງໃນປັດໄຈຕັດສິນໄຊຊະນະ ຂອງພາລະກິດການປະຕິວັດຢູ່ແຕ່ລະປະເທດ, ການນຳຂັ້ນສູງຂອງສອງປະເທດ ໄດ້ກຳນົດເອົາປີ 2022 ເປັນປີສາມັກຄີມິດຕະພາບ ລາວ-ຫວຽດນາມ ທີ່ມີຄວາມໝາຍສຳຄັນຍິ່ງທາງດ້ານປະຫວັດສາດ ແຫ່ງສາຍພົວພັນທີ່ເປັນມູນເຊື້ອມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ, ເປັນປີຄົບຮອບເລກມົນ ຫຼື ຄົບຮອບໃຫຍ່ ເພື່ອສະຫຼອງ 2 ວັນສຳຄັນຄື: ວັນສ້າງຕັ້ງສາຍພົວພັນການທູດ ຄົບຮອບ 60 ປີ (5/9/1962-5/9/2022) ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລາວ-ຫວຽດນາມ ຄົບຮອບ 45 ປີ (18/7/1977-

18/7/2022), ເຊິ່ງທັງ 2 ຝ່າຍ ຈະຮ່ວມກັນສະເຫຼີມສະຫຼອງໃຫ້ມີບັນຍາກາດ, ມີເນື້ອໃນ ແລະ ເປັນຂະບວນຟົດຟື້ນ ເພື່ອໂຄສະນາປະຫວັດສາດ-ສຶກສາອົບຮົມມູນເຊື້ອແຫ່ງສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່ ໃຫ້ພະນັກງານ-ລັດຖະກອນ ທະຫານ, ຕຳຫລວດ ແລະ ປະຊາຊົນ ໂດຍສະເພາະ ແມ່ນຄົນຮຸ່ນໜຸ່ມຂອງສອງປະເທດ ໃຫ້ມີຄວາມເຂົ້າໃຈຢ່າງ ຖືກຕ້ອງ, ເລິກເຊິ່ງ, ສືບຕໍ່ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມ ລະຫວ່າງ ລາວ-ຫວຽດນາມ.

ສະຫາຍ ທອງສະຫວັນ ພົມວິຫານ ຍັງກ່າວອີກວ່າ: ໃນໄລຍະຜ່ານມາ ຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ຫວຽດນາມ ໄດ້ມີການພົວພັນຮ່ວມມື ແລະ ປະສານສົມທົບກັນຢ່າງແໜ້ນແຟ້ນ ໃນການເປັນໃຈກາງປະສານ ງານ ແລະ ອຳນວຍຄວາມສະດວກ ໃຫ້ການນຳຂັ້ນສູງ ພັກ, ລັດ ແລະ ຂັ້ນຕ່າງໆທັງສູນກາງ ແລະ ທ້ອງຖິ່ນໃນສາຍ ພັກ, ອົງການຈັດຕັ້ງມະຫາຊົນ, ແນວໂຮມ, ສະມາຄົມມິດຕະພາບ ກໍຄືການທູດປະຊາຊົນຂອງ 2 ຝ່າຍ ໃນການ ຢ້ຽມຢາມ ແລະ ໄປມາຫາສູ່ກັນ, ລວມທັງການຕິດຕາມ-ຊຸກຍູ້ຜັນຂະຫຍາຍບັນດາຂໍ້ຕົກລົງຂອງ ການນຳຂັ້ນສູງ ຂອງ 2 ພັກ, 2 ລັດ ກໍຄືຂໍ້ຕົກລົງການຮ່ວມມື ລະຫວ່າງສອງຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ຫວຽດນາມ. ເຖິງຈະມີຄວາມຫຍຸ້ງຍາກ ໃນການເຄື່ອນໄຫວວຽກງານຕ່າງປະເທດ ໃນໄລຍະການແຜ່ລະບາດຂອງໂຄ ວິດ-19, ແຕ່ການພົວ ພັນລະຫວ່າງ ຄະນະພົວພັນຕ່າງປະເທດຂອງສອງສູນກາງພັກ ລາວ-ຫວຽດນາມ ກໍຍັງສືບຕໍ່ໄດ້ ຮັບການເສີມຂະຫຍາຍ ແລະ ເປັນໃຈກາງໃນການປະສານງານ-ອຳນວຍຄວາມສະດວກໃຫ້ແກ່ ການພົບປະ ລະຫວ່າງ ການນຳຂັ້ນສູງຂອງສອງຝ່າຍ ລາວ-ຫວຽດນາມ, ປະສານສົມທົບຢ່າງແໜ້ນແຟ້ນກັບບັນດາອົງການກ່ຽວຂ້ອງ ຜ່ານ ລະບົບວິດີໂອທາງໄກ; ມີການແລກປ່ຽນສານອວຍພອນ, ສານຊົມເຊີຍ ແລະ ໃຫ້ການສະໜັບສະໜູນເຊິ່ງກັນ ແລະ ກັນ ໃນໂອກາດສຳຄັນຕ່າງໆຂອງສອງຝ່າຍ.

### 3. ຄະນະພົວພັນຕ່າງປະເທດສູນກາງພັກ ເຜີຍແຜ່ເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ II ຂອງອົງຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ວັນກຳມະກອນສາກົນ ຄົບຮອບ 136 ປີ




ວັນທີ 12 ພຶດສະພາ 2022, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດຕັ້ງເຜີຍແຜ່ເຊື່ອມຊຶມມະຕິກອງ ປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ II ຂອງອົງຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ວັນກຳມະກອນ ສາກົນ ຄົບຮອບ 136 ປີ ໂດຍການເປັນປະທານ ຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ມີບັນດາສະຫາຍ ໃນຄະນະບໍລິຫານງານພັກ,

ສະມາຊິກພັກ - ພະນັກງານທົ່ວຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມຢ່າງພ້ອມພຽງ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ຕີລາຄາການຈັດຕັ້ງປະຕິບັດຜົນຂອງກອງປະຊຸມໃຫຍ່ສະມາຊິກພັກ ຂອງອົງຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ຄັ້ງທີ I ຜ່ານມາ ແລະ ການຈັດຕັ້ງປະຕິບັດຮອບດ້ານ ເລິກເຊິ່ງ ໂດຍສະເພາະແມ່ນການຕີລາຄາຜົນໄດ້ຮັບ ແລະ ຂໍ້ຄົງຄ້າງ, ທິດທາງໜ້າທີ່ ແລະ ວຽກງານຈຸດສຸມທີ່ມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງ ອົງຄະນະພັກ ຄຕພ ວາງອອກ ເພື່ອນໍາໄປຜັນຂະຫຍາຍໃຫ້ປະກົດຜົນເປັນຈິງ ໂດຍຫັນເປັນແຜນງານ, ໂຄງການລະອຽດ, ມີແຜນວຽກຈຸດສຸມ ໃນແຕ່ລະໄລຍະ. ຫຼັງຈາກນັ້ນ, ສະຫາຍ ວາລະໄຊ ເລັ່ງສະຫວັດ, ກໍາມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຜູ້ຊີ້ນໍາວຽກງານອົງການຈັດຕັ້ງມະຫາຊົນ ຂອງ ຄຕພ ໄດ້ຫວນຄືນມູນເຊື້ອປະຫວັດວັນກໍາມະກອນສາກົນ ຄົບຮອບ 136 ປີ ໂດຍສະຫາຍໄດ້ເນັ້ນເຖິງຄວາມເປັນມາ, ຄວາມໝາຍ, ຄວາມສໍາຄັນ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງ ອົງການຈັດຕັ້ງກໍາມະບານລາວ ທີ່ໄດ້ເສີມຂະຫຍາຍທາດແທ້, ລັກສະນະດີເລີດ ຂອງຊາວຜູ້ອອກແຮງງານ ເພື່ອໃຫ້ສະມາຊິກພັກ, ພະນັກງານ ແລະ ສະມາຊິກກໍາມະບານ ພາຍໃນ ຄຕພ ໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ວັນສໍາຄັນດັ່ງກ່າວ.